**ບົດປະກອບຄໍາເຫັນ**
**ຂອງທ່ານ ທັດສະນີ ພິລາວົງ ຄອບຄົວຕົວແບບ**
**ຕົວແທນກຸ່ມປູກພືດອິນຊີ ບ້ານທ່າຊ້າງ ເມືອງປາກງື່ມ**
**ຕໍ່ກອງປະຊຸມກະສິກໍາ ແລະ ປ່າໄມ້ ຄັ້ງວັນທີ 4-5 ມິນາ ປີ 2019.**

**----------------**

**ຮຽນ : ທ່ານປະທານກອງປະຊຸມ ທີ່ເຄົາລົບ ແລະ ນັບຖືຢ່າງສູງ**
**ຮຽນ : ບັນດາ ທ່ານ ຜູ້ແທນ, ແຂກທີ່ມີກຽດ ທ່ານຍິງ - ທ່ານຊາຍ ທີ່ເຄົາລົບ ແລະ ນັບຖື**

**ຂ້າພະເຈົ້າ ທ້າວ ທັດສະນີ ພິລາວົງ ອາຍຸ** 48 **ປີ, ເປັນເລຂາພັກບ້ານ, ນາຍບ້ານ ບ້ານທ່າຊ້າງ**, ເມືອງປາກງື່ມ ເປັນຕົວແທນໃຫ້ແກ່ກຸ່ມປູກພືດຜັກອິນຊີ ຂໍສະແດງຄວາມຮູ້ບຸນຄຸນ ແລະ ເປັນກຽດຢ່າງສູງ ທີ່ໄດ້ຮັບອະນຸຍາດຈາກທ່ານປະທານໃຫ້ຂ້າພະເຈົ້າຂຶ້ນມາປະກອບຄໍາເຫັນ ຕໍ່ກອງປະຊຸມໃຫຍ່ ຂອງກະຊວງກະສິກໍາ ແລະ ປ່າໄມ້ ເຊິ່ງເປັນກອງປະຊຸມສຸດທີ່ມີຄວາມໝາຍສໍາຄັນຕໍ່ວຽກງານກະສິກໍາ ແລະ ປ່າໄມ້

**ບັນດາທ່ານ ທີ່ຮັກແພງທັງຫຼາຍ!**

ປະຈຸບັນ ບ້ານທ່າຊ້າງ ເມືອງປາກງື່ມ ມີ ຈໍານວນພົນທັງໝົດ 814 ຄົນ ຍິງ 424 ຄົນ, ມີ 147 ຫຼັງຄາເຮືອນ ມີ 151 ຄອບຄົວ. ມີເນື້ອທີທັງໝົດ 1.015 ຮຕ ສ່ວນຫຼາຍແມ່ນອາຊີບຊາວນາ. ໃນເມື່ອກ່ອນ ຫຼັງຈາກເຮັດນາແລ້ວ ພໍ່ແມ່ປະຊາຊົນ ບ້ານທ່າຊ້າງ ໄດ້ເອົາການຫາປາ, ປູກຖົ່ວ, ປູກຫວາຍ ສົ່ງອອກຍັງປະເທດເພື່ອນບ້ານ ແຕ່ການຜະລິດຍັງມີໜ້ອຍ ກະແຈກກະຈາຍ ອີງຕາມຄວາມຕ້ອງການຂອງຕະຫຼາດທ້ອງຖິ່ນ ແລະ ບໍ່ເປັນລັກສະນະການຜະລິດສິນຄ້າ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນກໍຍັງພົບຄວາມຫຍຸ້ງຍາກ ແລະ ຂາດເຂີນຢູ່.

ໜ່ວຍພັກ ແລະ ອົງການປົກຄອງບ້ານ ພ້ອມດ້ວຍອົງການຈັດຕັ້ງທຸກພາກສ່ວນຂອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນໄດ້ມາຄົ້ນຄວ້າປຶກສາຫາລືກັນ ຊອກຫາທາງອອກທີ່ດີໃຫ້ແກ່ ພໍ່ ແມ່ ປະຊາຊົນ ຢູ່ພາຍໃນບ້ານໃຫ້ມີຢູ່ມີກິນ ໂດຍອີງໃສ່ທ່າແຮງບົ່ມຊ້ອນທີ່ເຮົາມີຢູ່ ຄື: ບ້ານ ທ່າຊ້າງມີຊົນລະປະທານ ສາມາດເຮັດນາໄດ້ 02 ລະດູ ແຕ່ຍັງຜະລິດເຂົ້າບໍ່ກຸ້ມກິນ ສາເຫດຍ້ອນເນື້ອທີ່ທໍາການຜະລິດມີໜ້ອຍບໍ່ພຽງກັບຄວາມຕ້ອງການ, ບ້ານຕັ້ງຢູ່ລຽບແຄມແມ່ນໍ້າງື່ມ ເວລາປ່ອຍນໍ້າຊົນລະປະທານມານໍ້າຊໍ້າພັດໄຫຼຊຶມຜ່ານລົງສູ່ແມ່ນໍ້າງື່ມດິນບໍ່ອູ້ມນໍ້າ ບໍ່ສາ ມາດເກັບກັກນໍ້າໄວ້ໃນນາເຂົ້າໄດ້ດົນ, ນໍາໃຊ້ນໍ້າຫຼາຍ ໃຊ້ຈ່າຍຄ່າກະແສໄຟຟ້າສູງ. ສະນັ້ນ ບ້ານຈຶ່ງໄດ້ປຸກລະດົມເອົາປະຊາຊົນຈໍານວນໜຶ່ງ ທີ່ມັກຮັກກ່ຽວກັບການປູກພືດ-ຜັກ ໄປຮໍ່າຮຽນເອົາບົດຮຽນການປູກຜັກມາຈາກປະເທດເພື່ອນບ້ານ ມາເຮັດທົດລອງປູກພືດດັ່ງກ່າວ ແຕ່ກໍ່ຍັງບໍ່ທັນໄດ້ຮັບຜົນດີທີ່ຄວນ ລາຍຮັບ ແລະ ຊີວິການເປັນຢູ່ ຍັງຂາດໆເຂີນ ດີງໜ້າຍັງບໍ່ເຖິງຫຼັງ.

ໄລຍະຕໍ່ມາ ຊ່ວງປີ 2009-2010 ທາງພັກ ແລະ ລັດ ຂັ້ນເທິງ ໄດ້ລົງມາຊີ້ນຳໆພາໂດຍກົງ ເປັນຕົ້ນ ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງ, ຫ້ອງການກະສິກຳ-ປ່າໄມ້ ເມືອງປາກງື່ມ ໄດ້ມາປຸກລະດົມ ໃຫ້ມີການສ້າງຕັ້ງເປັນກຸ່ມ ຜະລິດຜັກອິນຊີ ເປັນສິນຄ້າ ເບື້ອງຕົ້ນ ປະຊາຊົນ ກໍ່ມີຄວາມລັງເລໃຈ ໃນນັ້ນມີ 15 ຄອບຄົວ ຕັດສິນໃຈທົດທົດລອງ ເຮັດໃນເນື້ອທີ່ປູກ ຢູ່ 08 ໄລ່ ແລະ ມີເຮືອນຮົ່ມ 25 ຫຼັງ ຊາວສວນພວກຂ້າພະເຈົ້າ ໄດ້ຮັບການຊຸກຍູ້ຈາກ ພັກ-ລັດ ພ້ອມທັງ ໄດ້ຮັບການຖ່າຍທອດທັງຄວາມຮູ້ ເຕັກນິກການຜະລິດກະສິກຳອິນຊີ ຕະຫລອດຮອດນຳພາຈັດຕັ້ງການຜະລິດເປັນກຸ່ມ ທີ່ມີເປົ້າໝາຍເພື່ອເປັນສິນຄ້າ ຈຶ່ງພ້ອມພຽງກັນເຫັນວ່າ: ມີທ່າແຮງ ແລະ ໂອກາດສູງ ຈຶ່ງຕັດສິນໃຈ ໄດ້ກູ້ຢືມຈາກທະນາຄານສົ່ງເສີມກະສິກຳ ເພື່ອເປັນທຶນໝູນວຽນໃນເບື້ອງຕົ້ນ ຄອບຄົວລະ 10 ລ້ານກີບ; ຕໍ່ມາຮອດປີ 2012 ສາມາດເຂົ້າເຖິງຕະຫຼາດ ແລະ ໄດ້ຮັບການສະໜັບສະໜູນສ້າງຕະຫຼາດອິນຊີ ທີ່ເດີ່ນທາດຫຼວງ ເຮັດໃຫ້ມີຕະຫລາດທີ່ແນ່ນອນ ແລະ ມີຜູ້ບໍລິໂພກ ຫຼື ລູກຄ້າປະຈຳຫຼາຍຂຶ້ນ ຈຶ່ງໄດ້ຂະຫຍາຍເນື້ອທີ່ທຳ ການຜະລິດ ເປັນ 1 ຮຕ, ມີເຮືອນຮົ່ມ 45 ຫຼັງ; ຕົກມາຮອດປີ 2013, ມີສະມາຊິກເພີ່ມຂຶ້ນເປັນ 20 ຄອບຄົວ, ມີເນື້ອທີ່ 2 ເຮັກຕາ, ມີເຮືອນຮົ່ມ 60 ຫຼັງ. ປີ 2014 ສາມາດຜະລິດພືດ - ຜັກໄດ້ທັງໝົດ 54 ໂຕນສ້າງລາຍຮັບໄດ້ 106 ລ້ານ, ມີຜັກເຂົ້າຕະ ຫຼາດເພີ່ມເປັນ 02 ຈຸດຄື: ຕະຫຼາດທາດຫຼວງ, ເດີ່ນເຈົ້າຟ້າງຸ່ມ. ຊະນິດຜັກທີ່ນຳເອົາມາປູກກໍ່ມີຫຼາກຫຼາຍ ແລະ ເພີ່ມຊະນິດຂຶ້ນ.

ການປູກຜັກດັ່ງກ່າວ ເຫັນວ່າປີທຳອິດແມ່ນມີກຳໄລໜ້ອຍ ເພາະວ່າ ໄດ້ລົງທຶນຫຼາຍບວກກັບບົດຮຽນ ແລະ ປະສົບການບໍ່ຫຼາຍ; ຕົກມາເຖິງປີທີ 2 ທາງກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ໄດ້ນຳ ສົ່ງພະນັກງານວິຊາການລົງມາຊີ້ນຳ - ນຳພາ ແລະ ລົງເຮັດຕົວຈິງ ໄດ້ໃກ້ສິດຕິດແທດ, ມີການຕິດຕາມຢູ່ຕະຫຼອດ ບໍ່ວ່າຈະເປັນວິທີປູກ ແລະ ບົວລະບັດ ຮັກສາ ຫຼື ການເຮັດຝຸ່ນຊີວະພາບຈາກຂີ້ ສັດ ແລະ ຜັກທີ່ເສດເຫຼືອຕ່າງໆ ຈຶ່ງສາມາດເຮັດ ໃຫ້ພືດຜັກຈະເລີນ ເຕີບໂຕພ້ອມໃຫ້ຜົນຜະລິດດີຂຶ້ນ ແລະ ຍັງໄດ້ຮັບຢັ້ງຢືນເປັນຜັກອິນຊີ ນັບແຕ່ປີ 2013-14 ເປັນຕົ້ນມາ.

ມາຮອດປະຈຸບັນມີຈຳນວນຄອບຄົວເພີ່ມຂຶ້ນເປັນ ປະຈຸບັນກຸ່ມກະສິກຳອິນຊີ ບ້ານ ທ່າຊ້າງມີ 108 ຄອບຄົວ ມີເນື້ອທີທຳການຜະລິດ 122 ຮຕ ມີເຮືອນຮົມປູກຜືດຜັກຈຳນວນ 352 ຫຼັງ ສາມາດປູກພືດຜັກໄດ້ທັງແລ້ງ ແລະ ຝົນ ຜັກທີປູກສ່ວນຫຼາຍແມ່ນ ຫອມປ້ອມ, ຫອມບົວ, ຜັກກາດ, ສະຫຼັດ, ໝາກແຕງ, ໝາກຖົ່ວ, ໝາກຫຸ່ງ ແລະ ອື່ນໆ ເຊິ່ງການຜະລິດແມ່ນໄດ້ຮັບການຢັ້ງຢືນມາດຕະຖານກະສິກຳອິນຊີ ຈາກກົມປຸກຝັງ. ດ້ານການຈຳໜ່າຍ ມີຕະຫຼາດຈຳໜ່າຍມີຢູ່ 3 ແຫ່ງຄື: ເດີ່ນສູນການຄ້າ ລາວ - ໄອເຕັກ ເປີດຈຳໜ່າຍໃນວັນພູດ, ວັນເສົາ, ຢູ່ບ້ານ ດົງນາໂຊກ, ບ້ານ ຊ້າງຄູ່, ຫຼັກ 5 ຕໍ່ໜ້າຮ້ານສະບຽງອາຫານກອງທັບ ແມ່ນເປີດ ວັນຈັນ, ວັນພະຫັດ, ຜົນຜະລິດ ສະໜອງເຂົ້າຕະຫຼາດ ສະເລ່ຍ ຈຳນວນ 6-7 ໂຕນ, ມູນຄ່າ 55 ລ້ານກີບ ຕໍ່ອາທິດ, ສ້າງລາຍຮັບໃຫ້ຄອບຄົວໜຶ່ງ ສະເລ່ຍ ປະມານ 1 ຫາ 2 ລ້ານກີບຕໍ່ອາທິດ ຫຼື ປະມານ 4 ຫາ 8 ລ້ານກີບຕໍ່ເດືອນ; ສະນັ້ນ ກຸ່ມປູກຜັກອິນຊີຂອງພວກເຮົາ ທຽບໃສ່ເມື່ອກ່ອນແມ່ນດີຂຶ້ນຫຼາຍ ເຮັດໃຫ້ຊີວິດການເປັນຢູ່ ເບື້ອງຕົ້ນຈາກ ຄອບຄົວທຸກຍາກຂາດເຂີນ ກາຍເປັນຄອບຄົວມີຢູ່ມີກິນ ແລະ ມີເງິນສະສົມໄວ້ໃນຍາມມີຄວາມຈຳເປັນ, ສາມາດຫຼຸດພົ້ນຈາກຄອບຄົວທຸກຍາກໄດ້ ກາຍເປັນຄອບຄົວມີຢູ່ມີກິນ ບາງຄອບຄົວໃນເມື່ອກ່ອນມີພຽງລົດ ຈັກຂີ່ ແຕ່ປະຈຸບັນມີຮອດລົດຣຸນໄດໄວ້ຂີ່ນຳໃຊ້ອອກຕະຫຼາດ ແລະ ອື່ນໆ...

ສຳລັບທິດທາງໃນຕໍ່ໜ້າຈະໄດ້ນຳໃຊ້ເຕັກນິກວິຊາການຍົກສູງປະສິດທິພາບ ແລະ ສະມັດຕະພາບໃຫ້ຫລາຍຂຶ້ນ , ຂະຫຍາຍເນື້ອທີ່ທີ່ມີແລ້ວເພີ້ມຂຶ້ນ 60 ຮຕ, ໃນ 5 ປີ ຕໍ່ຫນ້າ, ຂະຫຍາຍເຮືອນຮົ່ມເພີ້ມຂຶ້ນອີກ 70 ຫລັງ, ຂະຫຍາຍ

ສະມາຊິກພາຍໃນບ້ານຫັນມາເຮັດກະສິກຳອິນຊີໃຫ້ໄດ້ 90% ເພື່ອໃຫ້ໄດ້ມາດຖານການເປັນບ້ານກະສິກຳອິນຊີ ແລະ ພັດທະນາການຫຸ້ມຫໍ່ຜົນຜະລິດກະສິກຳອິນຊີທີ່ເປັນສິນຄ້າໂອດອບ ໃຫ້ມີຄຸນນະພາບ ໄດ້ມາດຕະຖານ ຮັບປະກັນຄວາມສະອາດປອດໄພຕໍ່ຜູ້ບໍລິໂພກ.

**ບັນດາທ່ານ ທີ່ຮັກແພງທັງຫຼາຍ.**

ສິ່ງທີ່ກ່າວມາຂ້າງເທິງນັ້ນ ແມ່ນບົດຮຽນທີ່ຄອບຄົວຂອງຂ້າພະເຈົ້າ ລວມທັງກຸ່ມໄດ້ປະ ສົບພົບພໍ້ມາໃນ ຕົວຈິງ ດ້ວຍການຫັນປ່ຽນຈາກການຜິລິດເພື່ອການບໍລິໂພກພາຍໃນຄອບຄົວ ມາເປັນການຜະລິດເພື່ອເປັນສິນຄ້າ ແລະ ມີການຮວມຕົວເປັນກຸ່ມ ສາມາດຂະຫຍາຍປະລິມານການຜະລິດ ແລະ ສາມາດສ້າງຕະຫຼາດເປັນອັນຊະເພາະ ມີຕະຫລາດແນ່ນອນ ເພີ່ມພູນລາຍຮັບ ແລະ ຊີວິດການເປັນຢູ່ ນອກຈາກນີ້ຊີວິດກໍ່ມີຄວາມປອດໄພຈາກສານພິດ - ສານເຄມີ, ເປັນມິດ ກັບ ສິ່ງ ແວດລ້ອມ ມີສຸຂະພາບແຂງແຮງ ທັງຜູ້ຜະລິດ ແລະ ຜູ້ບໍລິໂພກ. ຢູ່ກັບຄອບຄົວມີຄວາມສຸກທາງກາຍ ແລະ ໃຈ ຄອບຄົວມີຄວາມອົບອຸ່ນ ມີຄວາມຮັກແພງສາມັກຄີກັນດີ. ຈາກບົດຮຽນດັ່ງກ່າວ ຂ້າພະເຈົ້າຂໍຢັ້ງຢືນວ່າ ຍ້ອນໄດ້ຮັບການຊີ້ນຳ ແລະ ນຳພາເຮັດຕົວຈິງ ທຸກຂັ້ນຕອນການຜະລິດ ນັບຕັ້ງແຕ່ລະບຽບການຂອງກະສິກຳອິນຊີ ເຕັກນິກ ວິທີການຜະລິດ ການບົວລະບັດຮັກສາ ຕະຫຼອດຮອດການລວມຕົວເປັນກຸ່ມ ເພື່ອສ້າງຕະຫລາດທີ່ແນ່ນອນ ເປັນສິນຄ້າກະສິກຳອິນຊີ ທີ່ມີຄວາມແຕກຕ່າງ ແລະ ດີກ່ວາສິນຄ້າກະສິກຳທົ່ວໄປນັ້ນ ເປັນການຊ່ວຍເຫຼືອ ໃຫ້ພວກຂ້າພະເຈົ້າ ມີອາຊີບທີ່ແນ່ ມີລາຍຮັບທີ່ເພີ່ມຂຶ້ນ ຂ້າພະເຈົ້າ ພ້ອມດ້ວຍຊາວສອນກຸ່ມຜູ້ຜະລິດຜັກອິນຊີບ້ານທ່າຊ້າງ ຂໍສຳນຶກບຸນຄຸນຂອງພັກ ລັດ ການນຳທຸກຂັ້ນ ທີ່ຊີ້ນຳນຳພາ ແລະ ລົງມາກົ້ງເກືອກລີເລືອ ກັບພວກຂ້າພະເຈົ້າຢ່າງແທ້ຈິງ ພວກຂ້າພະເຈົ້! ຂໍຂອບໃຈ ແລະ ສຳນຶກໃນບຸນຄຸນມານະໂອກາດນີ້ດ້ວຍ ພວກຂ້າພະເຈົ້າ ກໍ່ຂໍປະຕິຍານຕົນວ່າ ຈະຊື່ສັດຕໍ່ລະບຽບຂອງກະສິກຳອິນຊີ ຈະສືບຕໍ່ ຜະລິດຜັກອິນຊີທີ່ ສະອາດ ປອດໄພ ເພື່ອຮັບໃຊ້ສັງຄົມຕໍ່ໄປ

ແລະເພື່ອເປັນການເສີມຂະຫຍາຍການຜະລິດໃຫ້ຫຼາຍຂຶ້ນ ໃຫ້ໄດ້ຕາມຄາດໝາຍແຜນການທີ່ວາງໄວ້ ກໍ່ຂໍຮຽກຮ້ອງມາຍັງພາກລັດ ສືບຕໍ່ໃຫ້ການຊ່ວຍເຫຼືອ ດ້ານເຕັກນິກການຜະລິດ ແລະ ວິທີການ ວິຊາການໃໝ່ໆ, ພ້ອມດຽວກັນນັ້ນ ກໍ່ຂໍຮຽກຮ້ອງມາຍັງທ່ານ ຊ່ວຍຊຸກຍູ້ດ້ານການຕະຫລາດ ໂດຍສະເພາະຕະຫຼາດທີ່ແນ່ນອນ ເພາະພວກຂ້າພະເຈົ້າ ພວມປະເຊີນບັນຫາ ສິ່ງທ້າທາຍອັນໃຫຍ່ຫລວງ ໃນການຍ້າຍຕະຫລາດມາໂດຍຕະຫລອດ ດັ່ງນັ້ນ ຈຶ່ງຢາກຮຽກຮ້ອງມາຍັງທ່ານ ຊ່ວຍຊຸກຍູ້ຕະຫລາດທີ່ແນ່ນອນ ແລະ ມີເງື່ອນໄຂ ຫຼື ທຳເລທີ່ດີທີ່ສາມາດເຂົ້າເຖິງຜູ້ຊື້ ແລະ ຜູ້ຊື້ເຂົ້າເຖິງຕະຫຼາດໄດ້ສະດວກ.

ສຸດທ້າຍນີ້ ຂ້າພະເຈົ້າຂໍອວຍພອນໄຊແດ່ທ່ານປະທານກອງປະຊຸມຈົ່ງມີສຸຂະພາບເຂັ້ມແຂງ; ອວຍ ພອນໃຫ້ຜູ້ແທນ ແລະ ແຂກທີ່ມີກຽດ ມີໂຊກໃໝ່ໄຊງາມ, ມີຜົນສຳເລັດໃນໜ້າທີ່ວຽກງານ ຂອງພວກທ່ານ ທຸກປະການ; ອວຍພອນໃຫ້ກອງປະຊຸມໃຫຍ່ ຄັ້ງນີ້ ຈົ່ງບັນລຸຜົນສຳເລັດຢ່າງສະຫງ່າງາມ.

**“ ຂໍຂອບໃຈ ”**